ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY

ພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU)

ເພື່ອສຳຫຼວດເນື້ອທີ່ດິນ ແລະ ສຶກສາຄວາມເປັນໄປໄດ້ ໂຄງການປູກໄມ້ອຸດສາຫະກຳ (ໄມ້ກະຖິນນາໂລງ) ແລະ ສ້າງຕັ້ງໂຮງງານແປຮູບສິນຄ້າ ຢູ່ເຂດເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ ແຂວງສາລະວັນ

ໃນວັນທີ 31 ຕຸລາ 2019 ທີ່ໂຮງແຮມ ຄຣາວພາຊາ ນະຄອນຫຼວງວຽງຈັນ, ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ມີພິທີເຊັນບົດບັນທຶກ ຄວາມເຂົ້າໃຈ (MOU) ເພື່ອສຳຫຼວດເນື້ອທີ່ດິນ ແລະ ສຶກສາຄວາມເປັນໄປໄດ້ໂຄງການປູກໄມ້ອຸດສາຫະກຳ (ໄມ້ກະຖິນນາໂລງ) ແລະ ສ້າງຕັ້ງໂຮງງານແປຮູບສິນຄ້າ ຢູ່ເຂດເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ, ແຂວງສາລະວັນ ລະຫວ່າງລັດຖະບານ ແຫ່ງ ສປປ ລາວ, ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ແລະ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ຕ່າງໜ້າລົງນາມໃນການເຊັນສັນຍາໃນຄັ້ງນີ້ໂດຍ ແມ່ນທ່ານນາງ ຄຳຈັນ ວົງແສນບຸນ ຮອງນາຍົກລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ອະພິສິດ ຮຸຈິກຽດກຳຈອນ ປະທານສະພາບໍລິຫານ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານຂອງທ່ານ ກິແກ້ວ ສີງນາວົງ ຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ບຸນເຮັ່ງ ໄຊຍະເສນ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງສາລະວັນ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ຈຸດປະສົງແມ່ນດຳເນີນການສຳຫຼວດເນື້ອທີ່ດິນ ແລະ ສຶກສາຄວາມເປັນໄປໄດ້ ໂຄງການປູກໄມ້ອຸດສາຫະກຳ (ໄມ້ກະຖິນນາໂລງ) ແລະ ສ້າງຕັ້ງໂຮງງານແປຮູບສິນຄ້າ, ຊຶ່ງມີທີ່ຕັ້ງໂຄງການຢູ່ເຂດເມືອງ ຕະໂອ້ຍ ແລະ ເມືອງສະໝ້ວຍ ແຂວງສາລະວັນ, ເພື່ອນຳໃຊ້ທີ່ດິນ ແລະ ເງື່ອນໄຂທາງທຳມະຊາດທີ່ເໝາະສົມແກ່ກິດຈະການກະສິກຳ, ເພື່ອສົ່ງເສີມການພັດທະນາຂອງທ້ອງຖິ່ນ, ສ້າງວຽກເຮັດງານທຳໃຫ້ປະຊາຊົນລາວ ແລະ ສົ່ງເສີມທຸລະກິດພາຍໃນ. ນອກຈາກນັ້ນ, ຄູ່ສັນຍາຍັງມີຈຸດປະສົງອຳນວຍຄວາມສະດວກໃນການຖ່າຍໂອນທັກສະ, ຄວາມຮູ້ ແລະ ເຕັກໂນໂລຢີທີ່ຕິດພັນກັບກະສິກຳຂະໜາດໃຫຍ່ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງໃຫ້ແກ່ປະຊາຊົນລາວ.

